# ພຣະເຈົ້າທ່ອນບຸນ

ມາຫາ ທອງສວຍ ສັກດາຣັກ

Paradise Valley Church
2801 E. 8th Street.
National City, CA 92050

# ຄຳນຳ

ຂ້ານ້ອຍ ຂຽນໜັງສືນ້ອຍໆ ຫົວນີ້ ແມ່ນຂຽນຕາມຂນາດຂອງຄວາມເຊື່ອ ແລະຕາມຄວາມຮູ້ສຶກອັນເລິກເຊິ່ງ ອອກມາຈາກສ່ວນເລິກຂອງຈິດສຳນຶກຮູ້ຄວາມດີແລະຄວາມຊົ່ວຂອງຂ້ານ້ອຍ ຄວາມຮູ້ສຶກອັນນັ້ນໄດ້ບັນຈຸໄວ້ໃນປື້ມນ້ອຍໆ ເຫລັ້ມນີ້ເພື່ອໃຫ້ເປັນທິດທາງນຳພາທ່ານຜູ້ຫວັງ ຢາກໄດ້ຮັບຜົນຂອງການທຳບຸນ ແລະແນະນຳທ່ານໄປສູ່ຈຸດທີ່ທ່ານສົມຄວນຈະປະຕິບັດ ເຖິງວ່າປື້ມນີ້ມັນຈະນ້ອຍ ແຕ່ເມື່ອທ່ານອ່ານຈົນຈົບແລະປະຕິບັດຕາມທ່ານຈະໄດ້ພົບ ພຣະເຈົ້າອົງນິຣັນດອນຜູ້ທີ່ຈະອວຍພຣະພອນແດ່ທ່ານ ຕາມການກະທຳອັນເປັນທີ່ພໍພຣະໄທຂອງພຣະອົງ

ຂຽນດ້ວຍຄວາມຮັກ ໃນອົງພຣະເຈົ້າ!

# ເຈົ້າທ່ອນບຸນ

ເຈົ້າທ່ອນບຸນ ຊົງເປັນເຈົ້າ ມະຫາສວັນ ອະມະຕະ ພຣະອົງເປັນຊີວິດຕລອດເວລາ ໃນພຣະອົງບໍ່ມີເບື້ອງຕົ້ນແລະບໍ່ມີເບື້ອງປາຍ ໃນພາສາປາລີແຫ່ງປະເທດອິນເດັຽ ເອີ້ນຊື່ພຣະອົງວ່າ “ພຣະທັມ”
ເຊິ່ງແປວ່າ “ຜູ້ເປັນຢູ່ຕລອດເວລາ” ໃນພຣະຄຣິສຕະທັມຄັມພີ ທີ່ຊາວຄຣິສຕຽນທົ່ວໂລກ ເຄົາຣົບນັບຖືເປັນພຣະຄັມອັນສັກສິດ ໄດ້ບັນທຶກໄວ້ວ່າ “ແຕ່ຕົ້ນເດີມພຸ້ນ ພຣະທັມມີຢູ່ແລ້ວ ພຣະທັມນັ້ນຊົງເປັນພຣະເຈົ້າ ພຣະທັມນັ້ນແຫລະ ຊົງເປັນພຣະເຈົ້າ” (ໂຢຮັນ 1:1)

ພຣະເຈົ້າອົງນີ້ແຫລະ ຊົງເປັນຜູ້ສ້າງສັບພະສິ່ງທັງມະນຸສໂລກ ແລະຈັກກະພວານທົ່ວໆໄປ ທັງທີ່ຕາເຫັນໄດ້ແລະຕາເຫັນບໍ່ໄດ້ ທັງທີ່ມີອຳນາດແລະບໍ່ມີອຳນາດ ພຣະອົງຊົງສ້າງມະນຸດໃສ່ໂລກໜ່ວຍນີ້

ເບື້ອງຕົ້ນນັ້ນ ພຣະອົງຊົງສ້າງມະນຸດໃຫ້ບໍຣິສຸດຄືກັນກັບພຣະອົງ ພຣະຄັມພີກ່າວໄວ້ວ່າ ພຣະອົງຊົງດຳຣິວ່າ “ຈົ່ງໃຫ້ເຮົາສ້າງມະນຸດຄ້າຍຄືກັນກັບ ເຮົາ” (ປະຖົມມະການ 1:26) ພຣະເຈົ້າເປັນຜູ້ບໍຣິສຸດສັນໃດມະນຸດແຕ່ປະຖົມມະການກໍສັນນັ້ນ ພາຍຫລັງມະນຸດໄດ້ກາຍເປັນຜູ້ບໍ່ບໍຣິສຸດຍ້ອນຄວາມຢາກ ເຂົາຢາກເປັນຄື

ກັນກັບພຣະເຈົ້າຜູ້ຊົງສ້າງເຂົາມາ ແລ້ວບໍ່ປະຕິບັດຕາມຄຳສັ່ງສອນຂອງພຣະອົງ ຜົນແຫ່ງການບໍ່ປະຕິບັດຕາມຄຳສັ່ງສອນນັ້ນ ຈຶ່ງເປັນກົ້ນເຄົ້າຂອງຄວາມບາບ ແລະແມ່ນຈຸດນັ້ນແທ້ເປັນບໍ່ກຳເນີດຂອງຄວາມພິນາດຂອງສັບພະສິ່ງ

"ບາບ" ແມ່ນຄວາມຈິບຫາຍ ວາຍວອດ ຖືກເຜົາໄໝ້ດັບສູນຕລອດເວລາ ໝາຍຄວາມວ່າ "ຖືກດັບສູນທັງຮ່າງກາຍແລະຈິດວິນຍານ" ສະນັ້ນມະນຸດຈຶ່ງພະຍາຍາມຫາທາງແກ້ຄວາມບາບ ເພື່ອຢາກໄດ້ຊີວິດອັນຕລອດໄປເປັນນິດ

## ແກ້ບາບຢ່າງໃດ?

ເມື່ອກ່ອນພຸ້ນ ຖ້າຫາກມີຄົນນຶ່ງເຮັດຜິດກໍຈະເອົາສັດໄປຂ້າເສັ້ນສວງບູຊາ ເພື່ອລົບລ້າງຄວາມຜິດຂອງຕົນ ຫລືວ່າ ບໍຣິຈາກວັດຖຸໃຫ້ແກ່ອື່ນອື່ນ ເພື່ອແກ້ໄຂບັນຫາຊີວິດໃຫ້ແກ່ຜູ້ທີ່ມີບັນຫາ ເປັນການໄຖ່ບາບຂອງຕົນ ການກະທຳດັ່ງກ່າວນັ້ນ ແມ່ນເພື່ອເຮັດໃຫ້ຖືກໃຈຂອງຜູ້ທີ່ຈະໃຫ້ອະໄພໂທດ ເອີ້ນການກະທຳຢ່າງນັ້ນວ່າ "ກະທຳບຸນ" ແປວ່າ "ເຮັດໃຫ້ພໍໃຈ"



ຊ່ອຍຈະປະກາດຄວາມດີຂອງລາວ ປະຊາຊົນຢ່າງນີ້ແຫລະ ເປັນຜູ້ຫຍັບມາຫາພຣະຜູ້ເປັນເຈົ້າ (ເພງສັນລະເສີນ 24:1-6)

## ຊົງບັນຊາໃຫ້ດຳເນີນຊີວິດຢ່າງບໍຣິສຸດ

ເຫດສັນນັ້ນຈຶ່ງຕຽມຕົວ ຕຽມໃຈຂອງພວກທ່ານໃຫ້ດີ ຈົ່ງມີສະຕິລະວັງຕົວ ແລະຈົ່ງຕັ້ງຄວາມຫວັງໄວ້ໃຫ້ເຕັມບໍລິບູນໃນພຣະຄຸນ ຄືພຣະຄຸນເຊິ່ງຈະໂຜດປະທານ ແດ່ພວກທ່ານ ເມື່ອພຣະເຢຊູຈະສະເດັດມາປາກົດ ໂດຍທີ່ພວກທ່ານເປັນລູກທີ່ຟັງຄວາມຢ່າດຳເນີນຊີວິດຕາມກິເລດຕັນຫາແບບເກົ່າ ຢ່າງເມື່ອພວກທ່ານຍັງໂງ່ຢູ່ ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ ພວກທ່ານຈົ່ງກາຍເປັນຜູ້ບໍຣິສຸດໃນກິຣິຍາວາຈາທຸກປະການເໝືອນກັນ (1ເປໂຕ 1:13-15)

ຂໍໃຫ້ອົງພຣະຜູ້ເປັນເຈົ້າຊົງສະຖິດສະຖາພອນນຳທ່ານແລະໄດ້ຮັບພຣະພອນຈາກພຣະອົງແດ່ຖ້ອນ)

ເຫດຕ່າງໆ ຊຶ່ງມີຄວາມສງົບສິນເທ່ົ ເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຟອງນ້ຳ ມະນຸດຈະສລົບລົມຄົງເພາະຄວາມຢ້ານ ເພາະການຄອຍຖ້າເບິ່ງເຫດການທັງຫລາຍທີ່ຈະເກີດຂຶ້ນ ໃນດ້ວຍວ່າ ບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນໄຫວ ເມື່ອນັ້ນເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍຣິດທານຸພາບແລະສະງ່າຣາສີອັນຍິ່ງໃຫຍ່ ເມື່ອເຫດການເຫລົ່ານີ້ຕັ້ງຕົ້ນບັງເກີດຂຶ້ນນັ້ນ ທ່ານທັງຫລາຍຈົ່ງຍຶດຕົວແລະເງີຍຫົວຂຶ້ນ ດ້ວຍວ່າການຊົງໄຖ່ ທ່ານໃຫ້ພົ້ນກໍໃກ້ຈະເຖິງແລ້ວ (ລູກາ 21:25-28)

## ເຈົ້າຊີວິດອົງຍິ່ງໃຫຍ່

ແຜ່ນດິນໂລກແລະທຸກສິ່ງ ໃນໂລກເປັນຂອງພຣະເຈົ້າ ຜືນແຜ່ນດິນ ແລະທຸກຄົນອາສັຍຢູ່ກໍເປັນຂອງພຣະອົງ ພຣະອົງຊົງສ້າງໂລກນີ້ຢູ່ເທິງນ້ຳ ແລະພຣະອົງຊົງວາງຮາກຂອງແຜ່ນດິນຢູ່ພື້ນມະຫາສະມຸດອັນເລິກ ຜູ້ໃດອາດຂຶ້ນໄປເທິງພູຂອງພຣະຜູ້ເປັນເຈົ້າ ໄດ້ຜູ້ໃດມີອະນຸຍາດເຂົ້າໄປໃນພຣະວິຫານ ອັນບໍຣິສຸດຂອງພຣະອົງ ຜູ້ນັ້ນຕ້ອງເປັນຄົນຂາວສະອາດ ທັງການກະທຳແລະແນວຄິດ ແລະເປັນຜູ້ທີ່ບໍ່ຍອມນະມັດສະການຮູບເຄົາຣົບ ຫລືບໍ່ຕັ້ງຄຳສັນຍາເທັດ ແລ້ວພຣະຜູ້ເປັນເຈົ້າຈະອວຍພຣະພອນຄົນນັ້ນ ພຣະເຈົ້າເຊິ່ງເປັນພຣະຜູ້



## ບຸນແມ່ນຫຍັງ?

"ບຸນ" ແມ່ນການກະທຳຂອງມະນຸດທີ່ຈະຕ້ອງທຳຕໍ່ເພື່ອນມະນຸດດ້ວຍກັນ ເພື່ອເຮັດໃຫ້ເກີດຄວາມເພິ່ງພໍໃຈ ແກ່ຜູ້ເປັນເຈົ້າຂອງແຫ່ງຊີວິດ ພຣະອົງນັ້ນແຫລະ ເປັນຜູ້ໃຫ້ຜົນຂອງການກະທຳຕ່າງໆ ຂອງມະນຸດ

ການເຮັດບຸນນັ້ນ ແມ່ນການເສັຽສະລະບໍຣິຈາກໃຫ້ສິ່ງຈຳເປັນແກ່ຊີວິດໃຫ້ແກ່ຄົນອື່ນດ້ວຍ
ຄວາມອີດູຕົນສົງສານ ຕາມຂນາດທີ່ຕົນມີຄວາມສາມາດບໍຣະຈາກໄດ້ ດ້ວຍຄວາມຈິງໃຈແທ້ໆ ແຕ່ບໍ່ແມ່ນການກະທຳເພື່ອແກ້ໜ້າ ຫລືເພື່ອຊື່ສຽງ ໂດຍຄວາມຫວັງຢາກໄດ້ສິ່ງໃດສິ່ງນຶ່ງ ເຊັ່ນ ເພື່ອຄວາມມີອິດທິພົນ ຫລື ເພື່ອຄວາມລ້ຳລວຍ ໃນມະນຸສໂລກນີ້ ການບໍຣິຈາກເພື່ອໃຫ້ຄົນອື່ນພົ້ນທຸກ ຈຶ່ງເອີ້ນວ່າ "ເຮັດບຸນ" ໃຫ້ເຂົ້າໃຈວ່າ ເບື້ອງຕົ້ນແຫ່ງການເຮັດບຸນນັ້ນ ແມ່ນການໃຫ້ ຫລື ມັກເວົ້າຕິດປາກວ່າ "ທານ" ອັນຕໍ່ໄປແມ່ນການຮັກສາສິນ ຄື ການປະຕິບັດພຣະບັນຍັດ ການປະຕິບັດພຣະບັນຍັດນັ້ນ ເພື່ອສະກັດກັ້ນກາຍວາຈາ ແລະຈິດໃຈບໍ່ໃຫ້ໄຫລໄປໃນການກະທຳຝ່າຍຕ່ຳ ອັນເປັນຊ່ອງທາງໃຫ້ຄວາມບາບຄອບຄອງຈິດໃຈໄດ້

## ການກະທຳຝ່າຍຕ່ຳຄືແນວໃດ?

ການກະທຳຝ່າຍຕ່ຳ ຄືການເຮັດໃຫ້ຕົນເອງແລະຄົນອື່ນເດືອດຮ້ອນ ຕລອດຮອດການສ້າງຄວາມພິນາດຈິບຫາຍ ການກະທຳຢ່າງນັ້ນ ເອີ້ນວ່າ "ການກະທຳຝ່າຍຕ່ຳ"

## ຜົນ ແລະ ກິ່ງງ່າຂອງຄວາມບາບ

ຜົນຂອງຄວາມບາບ ແມ່ນຄວາມຕາຍ ໝາຍເຖິງການຕາຍຕລອດໄປ ທັງຮ່າງກາຍແລະຈິດວິນຍານ

ກິ່ງງ່າສາຂາ ຂອງຄວາມບາບ ແມ່ນຄວາມເຈັບໄຂ້ໄດ້ພະຍາດ ຄວາມແກ່ເຖົ້າ ຄວາມປວດລ້າວຈິດໃຈນານາປະການ ເມື່ອເວລາມີຊີວິດຢູ່ເທິງໂລກນີ້

ຊີວິດມະນຸດຊ່າງສັ້ນແທ້ໜໍ! ມັນເໝືອນກັບລົມຫາຍໃຈ ປີເດືອນຂອງເຂົາເໝືອນກັບເງົາທີ່ຫາຍວັບໄປນັ້ນ (ບົດເພງສັນລະເສີນ 144:4) ແຕ່ຊີວິດແຫ່ງວິນຍານຈິດ ໃນແດນນິຣະນາ ເປັນຊີວິດທີ່ຕລອດໄປສຳລັບວິນຍານຂອງຜູ້ມີບຸນ ແຕ່ຜູ້ບໍ່ມີບຸນຈະຕ້ອງຖືກຕັດສິນໃຫ້ດັບສູນໄປ ການດັບພິນາດໄປແລ້ວ ພວກເຮົາມັກເວົ້າຕິດປາກເລື້ອຍໆ ວ່າ "ຕາຍ" ບໍ່ໄດ້ເກີດ ຄຳວ່າ "ເກີດ" ໃນທີ່ນີ້ ບໍ່ໄດ້ໝາຍຄວາມວ່າ "ວິນຍານຈິດ" ທີ່ອອກຈາກຮ່າງກາຍມະນຸດແລ້ວຈະກັບ



ພຣະບຸດ ແມ່ນ "ພຣະເຢຊູ" ພຣະອົງຊົງເປັນພາຫະນະລຳໃຫຍ່ບັນທຸກຄົນ ຂ້າມຈາກຝັ່ງແຫ່ງຄວາມບາບໄປສູ່ມະຫາສວັນ

## ຂໍເຕືອນ

ທ່ານຜູ້ເປັນຄົນດີມີສິນທັມເອີຍ ຖ້າທ່ານບໍ່ຂຶ້ນເຮືອລຳທີ່ທ່ານຈະລອຍຂ້າມທະເລແຫ່ແປວໄຟ ອັນໄໝ້ຢູ່ເປັນຈັ່ງໃດໜໍ! ແລະທ່ານສັງເກດແດ່ບໍ່ວ່າໂລກປັດຈຸບັນເປັນຈັ່ງໃດໜໍ! ແລະທ່ານເຄີຍໄດ້ຍິນເຣື່ອງເສິກສົງຄາມ ໄພພິບັດຂອງທັມມະຊາດ ໂຣກໄພໄຂ້ເຈັບແບບປິ່ນປົວບໍ່ໄດ້ ຄວາມອຶດຢາກໂຫຍຫິວ ເກີດຂຶ້ນທົ່ວທຸກຫົນທຸກແຫ່ງ ເທິງແຜ່ນດິນໂລກ ພຣະຄັມຂອງພຣະເຈົ້າທວາຍໄວ້ກໍສົມຈິງແລ້ວບໍ່ແມ່ນບໍ່!

ຢ່າງໃດກໍຕາມ ໃນໃຕ້ຟ້ານີ້ພຣະເຈົ້າບໍ່ໄດ້ປະປະທານນາມຊື່ອື່ນໃດໃນໂລກອີກແລ້ວທີ່ຈະເປັນ ພາຫະນະນຳຄົນທັງປວງໃຫ້ລອດພົ້ນ

## ການສະເດັດມາຂອງພຣະຄຣິດ

ການສະເດັດມາຂອງພຣະຄຣິດ ຈະມີໝາຍສຳຄັນໃນດວງອາທິດ ໃນດວງຈັນແລະໃນດວງດາວທັງປວງ ແລະຈະມີຄວາມຮ້ອນເທິງແຜ່ນດິນໂລກ ຕາມປະ

ຍິນການເສິກສົງຄາມລະຫວ່າງປະເທດຕໍ່ປະເທດ ອານາຈັກຕໍ່ອານາຈັກ ການສູ້ຣົບຈະເກີດຂື້ນ ຈະເກີດແຜ່ນດິນໄຫວ ພູເຂົາໄຟລະເບີດ ເກີດຄວາມອຶດຫີວ ແລະກັນດານອາຫານ ໃນທົ່ວພິພົບໂລກ ແລະຄວາມຮັກອັນແທ້ຈິງຈະບໍ່ມີໃນຈິດໃຈຂອງມະນຸດ ຄົນຈະຫັກຫລັງກັນແລະກັນ ເກີດຄວາມກຽດຊັງກັນ ຄວາມອະທັມຈະແຜ່ກວ້າງອອກ ແຕ່ເຫດການນັ້ນກໍເປັນພຽງແຕ່ຂັ້ນຕົ້ນທໍ່ນັ້ນ ແບບດຽວກັບແມ່ມານເຈັບທ້ອງຈວນຈະເກີດລູກ ຜູ້ໃດອົດທົນໄດ້ ຈົນເຖິງທີ່ສຸດຜູ້ນັ້ນຈະລອດພົ້ນ

## ຈຸດແຫ່ງການພິພາກສາ

ເພາະເຫດການທີ່ມະນຸດເປັນຜູ້ທຳລາຍ ພຣະບັນຍັດ ຈິ່ງກາຍເປັນບາບໜັກຜົນຂອງຄວາມບາບຄືຄວາມຕາຍ

ແຕ່ພຣະບິດາເຈົ້າແຫ່ງສວັນ ຜູ້ຊົງສ້າງສັບພະສິ່ງ ຍັງມີພຣະໄທຮັກມະນຸດຫລາຍຈຶ່ງຊົງປະທານ ພຣະບຸດ ອົງເປັນພຣະພາກຂອງພຣະອົງເຂົ້າມາສູ່ໂລກ ເພື່ອຜູ້ທີ່ເຊື່ອແລະວາງໃຈໃນພຣະບຸດນັ້ນ ຈະພົ້ນຈາກການພິພາກສາ ຜູ້ທີ່ບໍ່ເຊື່ອ ແລະບໍ່ໄວ້ວາງໃຈໃນພຣະບຸດຂອງພຣະອົງ ກໍຈະຖືກພຣະພິໂຣດ (ຮ້າຍ) ແລະຈະຕ້ອງຖືກຕັດສິນຕາມການກະທຳຂອງເຂົາ



ເກີດເປັນມະນຸດອີກ ແຕ່ໝາຍເຖິງການເກີດໃນພົບ (ໂລກ) ແຫ່ງວິນຍານຈິດອັນນິຣັນດອນ ພາຍຫລັງຈາກການພິພາກສາຕັດສິນແລ້ວ ທັງນີ້ກໍເພາະວ່າ “ວິນຍານຈິດ” ຂອງມະນຸດທຸກໆ ຄົນ ຈະຕ້ອງຖືກພິພາກສາຕາມການກະທຳຂອງແຕ່ລະຄົນ

## ໃຜເປັນຜູ້ໃຫ້ຜົນຂອງບຸນ ຫລື ບາບ

ຜົນຂອງບາບນັ້ນ ມີມາແລ້ວຕັ້ງແຕ່ມະນຸດລະເມີດພຣະບັນຍັດຜູ້ທຳອິດພຸ້ນ ຜົນຂອງບາບຈຶ່ງຄອບງຳທຸກຢ່າງທີ່ມີຢູ່ ຄ່າຈ້າງຂອງຄວາມບາບຄືຄວາມພິນາດ ແຕ່ຂອງພຣະຣາຊທານທີ່ມາຈາກພຣະເຈົ້ານັ້ນແມ່ນຊີວິດນິຣັນດອນ ໂດຍທາງພຣະເຢຊູຄຣິດເຈົ້າ ອົງເປັນພຣະຜູ້ມີພຣະພາກຂອງພຣະເຈົ້າ ຊົງເປັນພຣະເຈົ້າຂອງມະນຸດທັງປວງ (ໂຣມ 6:23)

## ພຣະເຈົ້າແມ່ນໃຜ?

ພຣະເຈົ້າແມ່ນພຣະເຈົ້າ.... ບໍ່ມີໃຜຮູ້ຈັກພຣະນາມຂອງພຣະອົງ ເພາະວ່າພຣະອົງຊົງເປັນຜູ້ສ້າງຈັກກະວານແລະສັບພະສິ່ງ ບໍ່ເຄີຍມີສິ່ງທີ່ຖືກສ້າງ ຈະຮູ້ຈັກຊື່ຂອງຜູ້ສ້າງໄດ້ ມະນຸດຈະເອີ້ນ ພຣະນາມຂອງພຣະອົງຕາມຄວາມຢຳຢ້ານຂອງແຕ່ລະຊາດ ແຕ່ລະເຜົ່າພັນ

ຕາມຄວາມຮູ້ສຶກສຳນຶກ ທີ່ເກີດຂຶ້ນໃນຈິດໃຈຂອງພວກເຂົາເຈົ້າ ແຕ່ລະຊາດນັ້ນໆ ເຖິງຈະເປັນສຳນຽງພາສາແຕກຕ່າງກັນກໍຕາມ ແຕ່ມັນກໍມີຄວາມໝາຍແນວດຽວກັນໝົດ ເຊັ່ນພາສາລາວຂອງພວກເຮົາ ຮ້ອງພຣະນາມຂອງພຣະອົງວ່າ ພຣະຜູ້ເປັນເຈົ້າ ຫລື ພຣະເຈົ້າ ພາສາຊາວອາເມຣິກັນ ຫລືຊາດທີ່ພາສາອັງກິດກໍຮ້ອງພຣະອົງວ່າ ກ໊ອດ (God) ພາສາ ຊາວເອເຊັຽກາງສະເພາະຊົນຊາດ ອິສຣາເອັນກໍຮ້ອງ ພຣະອົງວ່າ ເຢໂຮວາ ຊາວອິນເດັຽ ເອີ້ນວ່າ ທັມມະ (ທຣຣະມະ) ທັງໝົດແຕ່ລະພາສາ ແປວ່າ “ເປັນຢູ່ສເມີ” ຄືເປັນແຫລ່ງເກີດຂອງສັບພະສິ່ງ

ຂ້ານ້ອຍຜູ້ຂຽນ ໜັງສືນ້ອຍໆຫົວນີ້ ຂໍໃສ່ຊື່ຂອງພຣະອົງນີ້ວ່າ **“ພຣະເຈົ້າທ່ອນບຸນ”** ຕາມຄວາມເຂົ້າໃຈ ແລະຄວາມເຊື່ອຂອງຂ້ານ້ອຍ ເຊື່ອວ່າພຣະເຈົ້າອົງນີ້ແຫລະເປັນຜູ້ໃຫ້ຜົນຂອງບຸນ ຕາມການກະທຳ ການງານຕ່າງໆ ຂອງມະນຸດອັນເປັນທີ່ພໍພຣະໄທຂອງພຣະອົງນີ້

**ຂ້ານ້ອຍ** ເປັນຄົນລາວ ພໍ່ແມ່ຂອງຂ້ານ້ອຍມີຄວາມເຊື່ອ ແລະນັບຖືຕາມຄຳສອນອັນທີ່ເອີ້ນວ່າພຸດທະສາສນາ ສືບມາເປັນປະເພນີ ເມື່ອກ່ອນພຸ້ນຂ້ານ້ອຍເອງກໍປະຕິບັດຕາມປະເພນີນີ້ຄືກັນ ໜຳບໍ່ພໍ



ມາຍຸໄດ້ 27 ປີ ໃນວັນນັ້ນທ້ອງຟ້າໄດ້ໄຂອອກ ພຣະວິນຍານບໍຣິສຸດ ເບິ່ງຄືຈັ່ງວ່າ ມີຮູບແບບ ນົກເຂົາບິນລົງມາສະຖິດຢູ່ເທິງບ່າຂອງພຣະອົງ ແລະມີສຽງດັ່ງອອກມາຈາກຟ້າສວັນວ່າ “ທ່ານເອີຍ ທ່ານເປັນລູກຜູ້ດຽວຂອງເຮົາ ເຮົາຊອບໃຈໃນຕົວເຈົ້າຫລາຍ” (ລູກາ 3:22) ພຣະເຈົ້າຊົງຮັກພຣະບຸດ ຈຶ່ງຊົງມອບທຸກສິ່ງໃນພຣະຫັດຂອງພຣະບຸດ ຜູ້ທີ່ເຊື່ອແລະວາງໃຈໃນພຣະບຸດກໍມີຊີວິດທີ່ບໍ່ພົບຄວາມຕາຍຈັກເທື່ອ

ຜູ້ທີ່ບໍ່ເຊື່ອຟັງພຣະບຸດກໍຈະບໍ່ເຫັນຊີວິດ ຊ້ຳບໍ່ພົ້ນພຣະພິໂຣດ (ຄວາມບໍ່ພໍໃຈ) ຂອງພຣະເຈົ້າປົກຄຸມຢູ່ເທິງຜູ້ນັ້ນດ້ວຍ (ໂຢຮັນ 3:36) ພຣະບິດາບໍ່ໄດ້ພິພາກສາຜູ້ໃດ ແຕ່ໄດ້ມອບການພິພາກສາທັງສິ້ນໄວ້ກັບພຣະບຸດ ເພື່ອຄົນທັງປວງຈະໄດ້ຖວາຍກຽດແດ່ພຣະບຸດເໝືອນທີ່ເຂົາໄດ້ຖວາຍກຽດແດ່ພຣະບິດາ ຜູ້ໃດບໍ່ໄດ້ຖວາຍກຽດແດ່ພຣະບຸດຜູ້ນັ້ນກໍບໍ່ໄດ້ຖວາຍກຽດແດ່ພຣະບິດາ ຜູ້ຊົງປະທານພຣະບຸດມາ (ໂຢຮັນ 5:22-23)

## ເຫດການກ່ອນວັນພິພາກສາມາເຖິງ

ເຫດການຕ່າງໆ ອັນເປັນເຄື່ອງໝາຍບອກເຫດການອັນຮ້າຍແຮງແກ່ມະນຸດ ເພື່ອຈະໃຫ້ເຂົາຫລົບຫລີກຈາກການພິພາກສາ ເຫດການນັ້ນຈະເກີດຂຶ້ນໃນໂລກເບື້ອງຕົ້ນການເກີດເຫດມີດັ່ງນີ້ “ທ່ານທັງຫລາຍຈະໄດ້

ພຣະເຢຊູຕຣັດແກ່ຄົນທັງປວງວ່າ..... "ເຮົາເປັນເສັ້ນທາງໄປສູ່ນະຄອນມະຫາສວັນ ເຮົາເປັນຄວາມຈິງ ແລະເຮົາເປັນຊີວິດ ບໍ່ມີມະນຸດໜ້າໃດໃນໃຕ້ທ້ອງຟ້າຈະເປັນພາຫະນະນຳທ່ານໄປເຖິງສວັນໄດ້ ນອກຈາກມາທາງເຮົາ" "ຜູ້ມາທາງເຮົາຖ້າບໍ່ບັງເກີດ ໃໝ່ຜູ້ນັ້ນຈະເຂົ້າໄປໃນແຜ່ນດິນສວັນບໍ່ໄດ້" (ໂຢຮັນ 14:4-6; ໂຢຮັນ 3:3)

## ບັງເກີດໃໝ່ຄືແນວໃດ?

ການບັງເກີດໃໝ່ໝາຍເຖິງ ຮັບບັບຕິສະມາດ້ວຍນ້ຳແລະພຣະວິນຍານບໍຣິສຸດ ຖວາຍຕົວແລະໃຈປະຕິບັດພຣະທັມ ຄື ປະຕິບັດພຣະເຢຊູ ກໍເພາະວ່າພຣະເຈົ້າຊົງຮັກໂລກ ຈຶ່ງໄດ້ປະທານພຣະບຸດຄືພຣະພາກສ່ວນທີ່ອັນນຶ່ງອັນດຽວກັບພຣະເຈົ້າ ເຂົ້າມາສູ່ ໂລກເພື່ອຜູ້ທີ່ວາງໃຈເຊື່ອ ພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ໄດ້ຊີວິດຕລອດໄປເປັນນິດ ບໍ່ຕາຍຈັກເທື່ອຢູ່ໃນມາຫານະຄອນສວັນ (ໂຢຮັນ 3:16)

ລູກປະຕິບັດຕາມໃຈຂອງພໍ່ ຜູ້ໃຫ້ກຳເນີດທຸກປະການ ຍ່ອມເປັນການທີ່ເພິ່ງພໍໃຈທີ່ສຸດຂອງພໍ່ສັນໃດ ພຣະເຢຊູເຈົ້າ ໄດ້ປະຕິບັດທຸກປະການຕາມນ້ຳພຣະທັຍຂອງພຣະບິດາຂອງພຣະອົງ ດັ່ງນັ້ນໃນວັນທີ່ ພຣະອົງຮັບບັບຕິສະມາ (ບວດ) ເມື່ອພຣະອົງ ມີພຣະຊົນ



ກໍໄດ້ບວດເປັນ ສະມະນະ ທີ່ມຜ້າກະສະວະພັດ ຕັດຈາກຄອງຄາຣະວາດ ເປັນສົງໃນສາສນາ ຮຽນຄຳສອນໃນສະຖາບັນຂອງສົງເປັນເວລາສິບກວ່າປີເພາະ ຄວາມຫວັງເປັນ ອະຣະຫັນຕະ ພຸດທະ ແຕ່ວ່າບໍ່ເປັນ ພຸດທະແມ່ນແຕ່ນ້ອຍດຽວເລີຍ ແມ່ນຮູ້ຄຳສອນກໍປະຕິບັດບໍ່ໄດ້ ເພາະວ່າການທີ່ຈະໄດ້ຮັບຜົນຂອງບຸນນັ້ນ ຕ້ອງແມ່ນເຮັດໃຫ້ຖືກຕ້ອງກັບກົດຂອງພຣະເຈົ້າຕັ້ງໄວ້

ຊາຫຍັງໜໍ ຊ່ຳພວກເຮົາ ພຣະພຸດທະເຈົ້າພຣະອົງກໍບໍ່ໄດ້ອວດໂຕຂອງພຣະອົງ ວ່າເຮົາຕະຖາຄົດເປັນຜູ້ບໍຣິສຸດເອງ ຫລືວ່າ ເຮົາເອງເປັນພຣະເຈົ້າ ຄຳເວົ້ານີ້ພຣະອົງບໍ່ເຄີຍຕຣັດກັບສາວົກຂອງພຣະອົງ ຈັກເທື່ອ ມີແຕ່ສອນໃຫ້ປະຕິບັດພຣະທັມມະ ພຣະອົງຕຣັດສເມີວ່າ ຜູ້ໃດປະຕິບັດພຣະທັມ ພຣະທັມຈະຄຸ້ມຄອງຜູ້ນັ້ນໃຫ້ພົ້ນໄພ ຜູ້ໃດເຫັນພຣະທັມ ຜູ້ນັ້ນເປັນພຸດທະ

## ພຣະພຸດທະເຈົ້າສອນແນວໃດ?

ກ່ອນຈະບອກວ່າ ພຣະພຸດທະເຈົ້າສອນຢ່າງໃດນັ້ນ ຂ້ານ້ອຍ ຂໍເລົ່າປະຫວັດຂອງພຣະອົງຈັກນ້ອຍ ພໍເປັນບ່ອນເບິ່ງວ່າ ພຣະພຸດທະ ແມ່ນໃຜ ແລະມີຄວາມໝາຍແນວໃດ?

ເມື່ອເວລາເກືອບ 3000 ປີມາແລ້ວ ເຈົ້າຊາຍແຫ່ງເມືອງກະບິລະພັດແຫ່ງປະເທດອິນເດັຽ ຊົງພຣະນາມວ່າ ເຈົ້າຊາຍສິທາດ (ສຣິທະຣະຖະ) ໄດ້ສະລະຣາຊສົມບັດອັນເປັນສິດທິ ທີ່ພຣະອົງຈະຕ້ອງໄດ້ຮັບຕາມປະເພນີສືບໆ ມາ ແຕ່ໂບຮານນະການ ແຕ່ພຣະອົງບໍ່ພໍພຣະໄທກັບຄວາມສຸກທີ່ເປັນກະສັດ ມີອຳນາດເໜືອກວ່າຄົນໝົດທັງອານາຈັກ ແຕ່ຕົນເອງກໍໄປຢູ່ໃຕ້ອຳນາດຂອງຄວາມແກ່ເຖົ້າ ຄວາມເຈັບໄຂ້ ແລະໃນທີ່ສຸດກໍໄປເຖິງຄວາມຕາຍ ອັນເປັນການພັດພາກຈາກກັນ ຢ່າງບໍ່ມີເວລາທີ່ຈະໄດ້ພົບພໍ່ກັນອີກ ເຊິ່ງເປັນການຈາກກັນອັນສຸດແສນເຈັບແສບທີ່ສຸດ ແລະເປັນການທໍຣະມານຍິ່ງໜັກ ພຣະອົງຊົງດຳຣິວ່າ ເມື່ອມັນມີທີ່ມາ ມັນຕ້ອງມີທີ່ໄປຂອງມັນ "ມີມັດ" ມັນຕ້ອງມີຜູ້ມັດ ແລະມັນຕ້ອງມີເງື່ອນທີ່ຈະຕ້ອງແກ້ມັດນັ້ນ ດັ່ງນັ້ນພຣະອົງທ່ານຈິ່ງຕັດສິນໃຈ ສະລະຣາຊສົມບັດອັນເປັນຄວາມສຸກຝ່າຍໂລກ ແລ້ວຊອກສແວງຫາທາງແຫ່ງຄວາມລອດພົ້ນຈາກອຳນາດຂອງຄວາມແກ່ເຖົ້າ ຄວາມເຈັບແລະຄວາມຕາຍ ພຣະອົງຊົງຕັ້ງຊື່ໃຫ້ສະຖານທີ່ທ່ານຕ້ອງການພົບນັ້ນວ່າ "ນິພພານ" ເຊິ່ງເປັນນະຄອນມະຫາສວັນ ອະມະຕະ ພຣະອົງຊອກຫາທາງທີ່ຈະເຂົ້າໄປໃນນະຄອນນັ້ນ ແຕ່ບໍ່ຮູ້ຈະເຮັດແນວໃດ ແລະໄປທາງໃດ ຈິ່ງຊອກຫາສຳນັກຮຽນ ເບື້ອງ



ສາມາດປະກາດໄດ້ພຽງແຕ່ 7 ຣັດທີ່ນັ້ນ ທ່ານກໍຖືກຢາເບືອ ເຖິງແກ່ຄວາມຕາຍ ເມື່ອອາຍຸໄດ້ 80 ປີ

ສະນັ້ນ ນັກປະພັນ ວັນນະຄະດີຣຸ້ນຕໍ່ມາຈຶ່ງເຮັດຮູບດອກບົວບານເຈັດດອກຮອງບາດຕີນແຕ່ລະ ກ້າວເພື່ອເປັນເຄື່ອງໝາຍ ໃຫ້ຮູ້ວ່າຄຳສອນຂອງທ່ານສາມາດປະກາດໄດ້ພຽງແຕ່ເຈັດຣັດທີ່ນັ້ນ

ຄວາມໝາຍຂອງດອກບົວບານແມ່ນຈິດໃຈ ຂອງປະຊາຊົນ ຕ້ອນຮັບເອົາຄຳສອນນັ້ນ ເດັກນ້ອຍ ຜູ້ຊາຍ "ໝາຍເຖິງ" ພຣະພຸດ

## ພຣະເຢຊູແມ່ນໃຜ?

ພຣະເຢຊູ ແມ່ນພຣະບຸດຂອງພຣະເຈົ້າ ພຣະອົງນີ້ແຫລະ ເປັນພຣະຜູ້ມີພຣະພາກຂອງພຣະເຈົ້າ ພຣະອື່ນນອກຈາກ ພຣະເຢຊູ ກໍບໍ່ມີພຣະພາກຂອງ ພຣະເຈົ້າ ລູກມີສ່ວນຫຍັງກັບພໍ່? ເມັດໝາກມ່ວງ ມີສ່ວນຫຍັງກັບຕົ້ນຂອງມັນ? ພຣະເຢຊູກໍເປັນທຳນອງ ດຽວນັ້ນ ພຣະອົງນັ້ນແຫລະ ແມ່ນ "ພຣະທັມ" ເຊິ່ງ ເປັນອັນນຶ່ງອັນດຽງກັບພຣະເຈົ້າ ໄດ້ເກີດເປັນມະນຸດ ເພື່ອໃຫ້ເປັນຄວາມສວ່າງອັນແທ້ຈິງ ໃຫ້ແກ່ວິນຍານຈິດທີ່ມືດບອດຂອງມະນຸດ ໃນພຣະອົງນັ້ນມີຊີວິດ ແລະຊີວິດນັ້ນເປັນຄວາມສວ່າງຂອງມະນຸດທັງປວງ (ໂຢຮັນ 1:4-5)

ເມື່ອພຣະພຸດທະເຈົ້າຮູ້ແຈ້ງ ໃນຄຳບອກ (ຕຣັສຮູ້) ທຳອິດນັ້ນ ທ່ານຕັ້ງໃຈວ່າ ຈະບໍ່ສະແດງແກ່ໃຜເລີຍ ແຕ່ພາຍຫລັງມາໄດ້ປ່ຽນໃຈ ຍ້ອນວ່າມີຄວາມອີດູຕົນສົງສານມະນຸດທີ່ງົມມືດຊອກຫາທາງ ແຫ່ງຄວາມລອດພົ້ນບາບ ຈົນບາງຄົນກໍຂາບໄຫວ້ພູເຂົາຫ້ວຍນ້ຳລຳເຊ ບາງຄົນກໍຂາບໄຫວ້ສັດສີ່ເທົ້າຫລື ສັດເລືອຄານເທິງແຜ່ນດິນໂລ ອັນໂຫດຮ້າຍໄປກວ່ານັ້ນ ລົງທືນຂາບຮູບລຶງ ຂອງຊີວະ ແລະ ໂຍນີ ຂອງນາງອຸມາ ມະນຸດຊ່າງເປັນຜູ້ໜ້າສົງສານແທ້ໆ ສະນັ້ນຈຶ່ງຕັດສິນໃນເທສນາບອກທາງທີ່ຈະໄປສູ່ ການປະຕິບັດພຣະທັມໃຫ້ແກ່ຄົນທັງປວງ ທີ່ມືດບອດຝ່າຍຈິດວິນຍານທີ່ພວມຍ່າງໄປສູ່ຄວາມພິນາດ ຄື ເໜົ່າບິນເຂົ້າໄຟ

## ບົວເຈັດດອກຂອງພຣະບາດ

45 ປີ ພຣະພຸດທເຈົ້າຊົງສັ່ງສອນປະຊາຊົນຊາວອິນເດັຽ ໃຫ້ກັບໃຈມາປະຕິບັດພຣະທັມ ພຣະອົງຊົງແນະນຳທາງເຂົ້າເຖິງພຣະທັມ ແລະວິທີການປະຕິບັດພຣະອົງ ແຕ່ຫົວໃຈທີ່ເຕັມດ້ວຍຕັນຫາ ແລະອະວິດຊາຂອງພວກເຂົານັ້ນເອງ ຫົວໃຈຂອງເຂົາຈຶ່ງບໍ່ຍອມອ້າຮັບເອົາຄຳສອນຂອງທ່ານ 45 ປີ ທ່ານຢູ່ກັບ ຄົນອິນເດັຽບອກພວກເຂົາຈາກເມືອງນ້ອຍສູ່ເມືອງໃຫຍ່ ຈາກຄອບຄົວຍາກຈົນສູ່ຄອບຄົວຂອງຄົນຮັ່ງມີ ໃນປະເທດອິນເດັຽ



ຕົ້ນຂອງພຣະອົງໄດ້ໄປສຶກສານຳສຳນັກຂອງດາບົດ ທີ່ມີຊື່ວ່າ ອະກາລະກະດາບົດ ສຶກສາສຳເຣັດຈາກສອງສຳນັກໃຫຍ່ນັ້ນຍັງບໍ່ຮູ້ທາງໄປປະຕິບັດທັມຢູ່ດີ ທ່ານຈຶ່ງທ່ຽວໄປເລື້ອຍໆ ຖາມໄປເລື້ອຍໆ ປີທີ່ 6 ຈວນຈະໝົດໄປແລ້ວ ທ່ານກໍຍັງບໍ່ຮູ້ຫຍັງໝົດ ດັ່ງນັ້ນຈຶ່ງຕັດສິນໃຈ ກະທຳຄືກັບບັນດາ ລືສີຊີໄພ ກະທຳກັນໃນສມັຍນັ້ນ ໝາຍວ່າ ທ່ານໄດ້ກະທຳຄວາມທຸກໃຫ້ເກີດແກ່ຮ່າງກາຍ ເພື່ອໃຫ້ເກີດຄວາມເບື່ອໜ່າຍໃນໂລກມະນຸດ ແລະເຜົາຜານຄວາມບາບໃຫ້ເຫືອດແຫ້ງໄປ ເພື່ອຈະໄດ້ເປັນຜູ້ບໍຣິສຸດ ແຕ່ກໍເປັນໄປບໍ່ໄດ້ອີກ ພຣະອົງຄິດວ່າ ຫລືເປັນຍ້ອນການປະຕິບັດບໍ່ພຽງພໍບໍ່ ຈຶ່ງບໍ່ສຳເຣັດ ຄືບໍ່ຮູ້ຈັກທາງປະຕິບັດພຣະທັມ ດັ່ງນັ້ນພຣະອົງຈຶ່ງຕັດສິນໃຈຈະຂ້າໂຕເອງໃຫ້ຕາຍໄປເສັຽ ເລີຍຖ້າບໍ່ພົບທາງນັ້ນ ສະນັ້ນພຣະອົງຈຶ່ງອັດຊ່ອງລົມທຸກຊ່ອງທີ່ມີໃນຮ່າງກາຍ ການກະທຳແບບນັ້ນຈຶ່ງເຮັດໃຫ້ພຣະອົງທ່ານສລົບໄປ ໃນເວລາທີ່ສລົບສໄລຢູ່ນັ້ນ ສຽງຄືກັນກັບສຽງພິນ ເປັນສາມຈັງຫວະ ສຽງ ຄື ສຽງທຳອິດເປັນສຽງທີ່ເຄັ່ງທີ່ສຸດ ແລະໃນທີ່ສຸດກໍໄດ້ຍິນສຽງຂອງສາຍນັ້ນຂາດ ສຽງທີ່ສອງ ເປັນສຽງທີ່ຍານ ຈົນເກືອບຈະບໍ່ເປັນສຽງເລີຍ ຟັງແລ້ວຈັ່ງແມ່ນບໍ່ຮູ້ຈັກມ່ວນຈັກດີ້ ສຽງທີ່ສາມ ເປັນສຽງທີ່ພໍດີ ມ່ວນແທ້ມ່ວນ

ວ່າ ຟັງແລ້ວອອນຊອນຕິດອົກຕິດໃຈ ຄືວ່າມີຊີວິດຊາວາແທ້ໆ

ແລະໄດ້ຍິນສຽງມາຈາກເບື້ອງເທິງ ເປັນພາສາທີ່ ພຣະອົງສາມາດເຂົ້າໃຈໄດ້ບອກວ່າ "ຖືກແລ້ວ ທຸກຢ່າງມັນຈະຕ້ອງມີທີ່ມາຂອງມັນ ຖ້າມີກົກມັນຕ້ອງມີປາຍ" ຈາກນັ້ນພຣະອົງກໍຄ້າມຮູ້ເມື່ອຄືງໄດ້ສິຕິຟື້ນຄືນມາ ບໍ່ເຫັນໃຜ ນອກຈາກລືສີຄົນທເຝົ້າບົວລະບັດພຣະອົງຢູ່ ພຣະອົງຈຶ່ງຖາມພວກນັ້ນວ່າ ເວລາທີ່ເຮົາສລົບໄປມີໃຜມາຫາເຮົາບໍ່? ແລະພວກທ່ານໄດ້ຍິນສຽງຫຍັງແດ່ບໍ່? ພວກນັ້ນ ຕອບວ່າ ພວກຂ້ານ້ອຍບໍ່ເຫັນຜູ້ໃດມາຫາທ່ານ ແລະບໍ່ໄດ້ຍິນສຽງຫຍັງເລີຍ ພຣະອົງຕຣັດວ່າ ຖ້າຢ່າງນັ້ນກໍຢ່າເທາະ ຕໍ່ຈາກນັ້ນມາເຈົ້າຊາຍສິທາດໄດ້ປ່ຽນແນວປະຕິບັດແບບໃໝ່ ຫັນມາບໍາຣຸງຮ່າງກາຍໃຫ້ສົມບູນ ແຕ່ພິຈາຣະນາສຽງພິນ ແລະຄໍາເວົ້າເຊິ່ງ ພຣະອົງໄດ້ຍິນ ເມື່ອເວລາສລົບ ສໄລຢູ່ນັ້ນຈຶ່ງເປັນເຫດໃຫ້ລືສີຫ້າຄົນບໍ່ພໍໃຈບົວລະ ບັດພຣະອົງອີກເພາະຄິດວ່າ ສິທາດ ຈະບໍ່ເປັນຜູ້ພົບທາງປະຕິບັດພຣະທັມແນ່ນອນ ເພາະວ່າ ລາວເປັນຄົນຫັນມາມັກມາກໃນການກິນແລ້ວ ພວກລືສີ ຈຶ່ງ ໜີພຣະອົງໄປຢູ່ບ່ອນອື່ນ

ໃນວັນພຣະຈັນເຕັມດວງ ຂອງເດືອນ ວິສາຂາມາດ ກ່ອນພຸດທະສັກກະລາດ (ພ.ສ) 45 ປີ ເຈົ້າຊາຍ ພຣະອົງນັ້ນໄດ້ປະທັບນັ່ງເທິງກ້ອນຫີນທີ່ປູດ້ວຍຫຍ້າຄາ ໃຕ້ຮົ່ມໂພແຄມຝັ່ງແມ່ນໍ້າເນຣັນຊະຣາ ພຣະອົງປິ່ນໜ້າໄປທາງເບື້ອງທິດຕາເວັນອອກ ເບິ່ງກະແສນໍ້າທີ່ໄຫລລິນບໍ່ຂາດສາຍ ມີໝູ່ປາດິດເຕັ້ນລ່ອງລອຍ ໄປມາ ເຮັດໃຫ້ໜ້ານໍ້າກະຟົບກະເຟືອນເປັນຄື່ນລະລິກລະລ໊ອກ ຕອບກັບແສງພຣະອາທິດອຸໄທທີ່ກໍາລັງ ໂຜ່ພົ້ນຈາກຂອບໂລກ ເຮັດໃຫ້ມັນເຫລື້ອມລະຍິບລະຍັບຄືກັນກັບກາກເພັດທີ່ນາຍຊ່າງເຈັຽຣະໄນແລ້ວສາຍລົມເຢັນໃນຍາມເຊົ້າຫອບເອົາກິ່ນຫອມຂອງເກສອນ ດອກໄມ້ປ່າມາກະທົບພຣະນາສິກຂອງພຣະມຸນີພຸດທະເຮັດໃຫ້ເບີກບານພຣະໄທຍິ່ງໜັກ ທ່ານສູດເອົາອາກາດສົດບາດຍາວໆ ສອງສາມບາດ ເຂົ້າສູ່ປອດ ແລ້ວເບິ່ງອ້ອມພຣະອົງທຸກຢ່າງ ສັງມາຈົບງາມແທ້ໜໍ ທັນໃດນັ້ນຄວາມສວ່າງໃນຈິດໃຈໄດ້ກໍ່ເກີດຂຶ້ນ ບັດນີ້ ພຣະອົງໄດ້ຮູ້ແຈ້ງຄັກ ໃນຄໍາຕຣັດແລະສຽງພິນທີ່ໄດ້ ຍິນໃນວັນນັ້ນ ພຣະອົງໄດ້ຕຣັດກັບຕົນເອງວ່າ "ວັນນີ້ ສັມມາພຸດທະໄດ້ເກີດແລ້ວໃນໂລກ" ແລະໄດ້ຕຣັດ ກັບມານວ່າ "ເຮົາຊະນະຄວາມຕາຍແລ້ວ ໂອ໋ຄວາມ ຕາຍເອີຍໄລພິດຂອງເຈົ້າຢູ່ໃສ? ໄລພິດຂອງເຈົ້າ ເຮົາໄດ້ຫັກຖິ້ມແລ້ວ" (ວິສຸທິມັກ ເຫລັ້ມ 3) ຂໍ້ຄວາມນີ້ກົງກັບຄໍາຂອງພຣະເຢຊູຄຣິດເຈົ້າ ຕຣັດວ່າ "ໃຜກໍຕາມທີ່ຮັບເອົາພຣະອົງເປັນພຣະຜູ້ຊ່ອຍໃຫ້ລອດພົ້ນ ຜູ້ນັ້ນຈະໄດ້ໄຊຊະນະຄວາມຕາຍ" (1ໂກຣິນໂທ 15:55-56)